Washington State Department of Social & Health Services
ESA Economic Services Administration

ໃບອະນຸຍາດການຈ່າຍເງິນຄືນສຳລັບການຊ່ວຍເຫລືອໃນຊ່ວງເວລາລໍຖ້າ
Interim Assistance Reimbursement Authorization

ຊື່ຂອງຜູ້ຮັບການຊ່ວຍເຫລືອ	ເລກປະກັນພັຍສັງຄົມ	ເລກ ID ຂອງຜູ້ຮັບ	ເລກໂທຣະສັບ
ທີ່ຢູ່ຖນົນ	ເມືອງ	ຣັດ	ຊິບໂຄດ
ທີ່ຢູ່ໄປສະນີ	ເມືອງ	ຣັດ	ຊິບໂຄດ

ຄໍາວ່າ ຣັດ ຫມາຍເຖິງກົມສັງຄົມສົງເຄາະ ແລະ ສາທາຣະນະສຸກຂອງຣັດວໍຊິງຕັນ. ຄໍາວ່າ ຂ້າພະເຈົ້າ, ຂ້ອຍ, ແລະ ຂອງຂ້າພະເຈົ້າ ຫມາຍເຖິງຜູ້ຮັບການຊ່ວຍເຫລືອຜູ້ທີ່ຖືກບົ່ງຊື່ຢູ່ຂ້າງເທິງນີ້. ຄໍາວ່າ **SSA** ຫມາຍເຖິງພະແນກປົກຄອງຄວາມຫມັ້ນຄົງຂອງສັງຄົມ. ຄໍາວ່າ **SSI** ຫມາຍເຖິງຣາຍໄດ້ຄວາມຫມັ້ນຄົງເພີ້ມເຕີມຂອງພະແນກຄວາມຫມັ້ນຄົງຂອງສັງຄົມ, ຊຶ່ງເປັນໂຄງການເພີ້ມເຕີມຣາຍໄດ້ຂອງຣັດຖະບານກາງ. ຄໍາວ່າ ການຊ່ວຍເຫລືອໃນຊ່ວງເວລາລໍຖ້າຫມາຍເຖິງການຈ່າຍເງິນສົດທີ່ຖືກກູ້ຢືມທັງຫມົດໂດຍເງິນທຶນຂອງຣັດ ແລະ ຖືກເອົາໃຫ້ໂດຍຣັດໃຫ້ແກ່ ຫລື ໃນນາມຂອງຜູ້ຮັບການຊ່ວຍເຫລືອຜູ້ທີ່ສອດຄ່ອງນໍາຄວາມຕ້ອງການພື້ນຖານຂອງຜູ້ຮັບການຊ່ວຍເຫລືອຊຶ່ງຕໍ່ມາໄດ້ຖືກຈ່າຍຊໍ້າກັນໂດຍເງິນ **SSI** ຈ່າຍເລີ້ມຕົ້ນ ຫລື ເປີດຄືນໃຫມ່.

ແມ່ນຫຍັງທີ່ຂ້າພະເຈົ້າອະນຸຍາດໃຫ້ໂດຍການເຊັນຊື່ໃສ່ຟອມໃບນີ້?

ຖ້າຫາກວ່າຂ້າພະເຈົ້າໄດ້ຖືກພົບວ່າມີເງື່ອນໄຂໄດ້ຮັບການຈ່າຍເງິນ SSI, ຂ້າພະເຈົ້າເຂົ້າໃຈວ່າຂ້າພະເຈົ້າອະນຸຍາດໃຫ້ເຈົ້າຫນ້າທີ່ຂອງພະແນກ SSA ທີ່ຈະເບີກເງິນ SSI ປ້ອນຄືນຫລັງຂອງຂ້າພະເຈົ້າອອກໃຫ້ຣັດ, ຈໍານວນເງິນເທົ່າທຽມກັນກັບຈໍານວນເງິນການຊ່ວຍເຫລືອຫລວງຂອງຣັດທີ່ຂ້າພະເຈົ້າໄດ້ຮັບ.

ຣັດມີສິດອໍານາດທີ່ຈະບົ່ງໃຫ້ຂ້າພະເຈົ້າເຊັນຊື່ໃສ່ໃບອະນຸຍາດໃບນີ້ບໍ່?

ແມ່ນ. ການເຊັນຊື່ໃສ່ໃບອະນຸຍາດແມ່ນກົດກໍານົດເງື່ອນໄຂໄດ້ຮັບສໍາລັບການຊ່ວຍເຫລືອເງິນສົດທີ່ຖືກອອກທຶນໃຫ້ໂດຍຣັດອີງຕາມກົດຫມາຍ WAC 388-400-0060 ແລະ RCW 74.62.030. ຖ້າຫາກວ່າຂ້າພະເຈົ້າປະຕິເສດທີ່ຈະເຊັນຊື່ໃບອະນຸຍາດໃບນີ້, ຂ້າພະເຈົ້າບໍ່ສາມາດຮັບການຊ່ວຍເຫລືອຫລວງຂອງຣັດ.

ຂ້າພະເຈົ້າຈະເຮັດຫຍັງແດ່ຖ້າຫາກວ່າພະແນກ SSA ສົ່ງເງິນຈ່າຍປ້ອນຄືນຫລັງເຕັມຈໍານວນໄປຫາຂ້າພະເຈົ້າ?

ຂ້າພະເຈົ້າເຂົ້າໃຈວ່າຂ້າພະເຈົ້າບໍ່ສາມາດໄດ້ຮັບການຊ່ວຍເຫລືອຫລວງຂອງຣັດ ແລະ ເງິນ SSI ສໍາລັບຣະຍະເວລາດຽວກັນ. ເມື່ອຖືກອະນຸມັດໃຫ້ໄດ້ຮັບເງິນ SSI, ຂ້າພະເຈົ້າເຂົ້າໃຈວ່າການຊ່ວຍເຫລືອຫລວງຂອງຣັດກາຍເປັນຫນີ້ທີ່ຂ້າພະເຈົ້າຕິດຫນີ້ຢູ່ ແລະ ຕ້ອງຈ່າຍຄືນ. ຖ້າຫາກວ່າຂ້າພະເຈົ້າໄດ້ຮັບເງິນ SSI ປ້ອນຄືນຫລັງທີ່ບໍ່ຖືກລຸດລົງເພື່ອຈະຈ່າຍຄືນໃຫ້ຣັດ, ຂ້າພະເຈົ້າຈະໂທຫາຫ້ອງການກອບກູ້ເອົາເງິນຄືນໄດ້ທີ່ 1-800-562-6114 ແລະ ປະຕິບັດຕາມຄໍາຊີ້ນໍາຂອງເຂົາເຈົ້າກ່ຽວກັບວ່າຈະຈ່າຍຫນີ້ຄືນແນວໃດ.

ໃບອະນຸຍາດໃບນີ້ມີຜົນໃຊ້ການໄດ້ດົນນານປານໃດ?

ໃບອະນຸຍາດຕ້ອງຖືກເຊັນຊື່ໃສ່ໂດຍຂ້າພະເຈົ້າ ແລະ ຜູ້ຕາງຫນ້າຂອງຣັດເພື່ອຈະມີຄຸນຄ່າໃຊ້ການໄດ້. ມັນຈະຖືກຜູກມັດໃສ່ຣັດ ແລະ ຂ້າພະເຈົ້າເປັນເວລານຶ່ງປີຕາມປະຕິທິນຈາກວັນທີທີ່ຣັດໄດ້ຮັບມັນ ແລະ ຂ້າພະເຈົ້າຕົກລົງຍິນຍອມທີ່ຈະຍື່ນຄໍາຮ້ອງຂໍເອົາເງິນ SSI ໃນຣະຫວ່າງເວລານັ້ນ.

ເມື່ອເວລາຄໍາຮ້ອງຂໍເອົາເງິນ **SSI ໄດ້ຖືກຍື່ນແລ້ວ**, ໃບອະນຸຍາດໃບນີ້ **ຈະດໍາເນີນມີຄຸນຄ່າໃຊ້ການໄດ້** ຈົນກວ່າ:

- ຂ້າພະເຈົ້າໄດ້ຮັບການຈ່າຍເງິນ SSI ເທື່ອທໍາອິດຂອງຂ້າພະເຈົ້າ; ຫລື
- ຂ້າພະເຈົ້າບໍ່ຍື່ນຄໍາຮ້ອງຂໍເອົາການກວດເບິ່ງຄືນ ຫລື ການອຸທອນນໍາອໍານາດການປົກຄອງ ແລະ ກໍານົດເວລາສູງສຸດທີ່ຈະຍື່ນໄດ້ກາຍເວລາແລ້ວ; ຫລື
- ຣັດ ແລະ ຂ້າພະເຈົ້າຕົກລົງເຫັນພ້ອມທີ່ຈະສິ້ນສຸດໃບອະນຸຍາດໃບນີ້.

ໃບອະນຸຍາດໃບນີ້ບໍ່ໄດ້ຖືກຜູກມັດໃສ່ຂ້າພະເຈົ້າຖ້າຫາກວ່າຣັດບໍ່ແຈ້ງບອກພະແນກ SSA ພາຍໃນ 30 ວັນຂອງວັນທີທີ່ຂ້າພະເຈົ້າໄດ້ເຊັນຊື່ໃສ່ໃບອະນຸຍາດໃບນີ້.

ໃບອະນຸຍາດໃບນີ້ໃຊ້ເປັນການຍື່ນປ້ອງກັນສໍາລັບເງິນຊ່ວຍເຫລືອ SSI ບໍ່?

ແມ່ນແລ້ວ, ຖ້າຫາກວ່າຂ້າພະເຈົ້າບໍ່ທັນໄດ້ຍື່ນຄໍາຮ້ອງຂໍເອົາເງິນ SSI ເທື່ອ, ພະແນກ SSA ຕ້ອງຍອມຮັບເອົາຟອມໃບນີ້ ແລະ ໃຊ້ວັນທີທີ່ຂ້າພະເຈົ້າເຊັນຊື່ໃສ່ໃບອະນຸຍາດໃບນີ້ວ່າເປັນວັນທີທີ່ຂ້າພະເຈົ້າໄດ້ຂໍເອົາເງິນ SSI ຖ້າຫາກວ່າຂ້າພະເຈົ້າຍື່ນຄໍາຮ້ອງຂໍເອົາເງິນ SSI ພາຍໃນ 60 ວັນຂອງວັນທີທີ່ຂ້າພະເຈົ້າເຊັນຊື່ໃສ່ໃບອະນຸຍາດ. ຖ້າຫາກວ່າຂ້າພະເຈົ້າບໍ່ຍື່ນຄໍາຮ້ອງຂໍເອົາເງິນ SSI ພາຍໃນ 60 ວັນ, ໃບອະນຸຍາດໃບນີ້ຈະບໍ່ປົກປ້ອງວັນທີຍື່ນຂໍເອົາເງິນ SSI ຂອງຂ້າພະເຈົ້າຕໍ່ໄປອີກແລ້ວ.

ຂ້າພະເຈົ້າມີສິດໃນການຟັງເຣື່ອງຈາກອໍານາດການປົກຄອງຖ້າຫາກວ່າຂ້າພະເຈົ້າບໍ່ເຫັນພ້ອມນໍາການກະທໍາທີ່ຖືກເຮັດລົງໄປໂດຍຣັດກ່ຽວກັບໃບອະນຸຍາດໃບນີ້.

ລາຍເຊັນຂອງຜູ້ຮັບການຊ່ວຍເຫລືອ	ວັນທີ
ລາຍເຊັນຂອງຜູ້ຕາງຫນ້າຂອງກົມ DSHS	ວັນທີທີ່ໄດ້ຮັບໂດຍກົມ DSHS

Barcode label

18235